ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

VIENTIANE CENTER
ວຽງຈັນເຊັ້ນເຕີ

ເລກທີ: 010 /ວຈຊຕ

ນະຄອນຫຼວງວຽງຈັນ, ວັນທີ: 09 APR 2025

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື

ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ ທີ່ນັບຖື

ບັນດາຜູ້ຖືຮຸ້ນຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ທີ່ນັບຖື

ເລື່ອງ: ແຈ້ງມະຕິກອງປະຊຸມສາມັນ ສະພາບໍລິຫານຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ຄັ້ງທີ 1 ປະຈຳປີ 2025.

- ອີງຕາມ ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022.

- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ (ວຈຊຕ) ຂໍຖືເປັນກຽດ ແຈ້ງມະຕິຂອງກອງປະຊຸມສາມັນ ສະພາ ບໍລິຫານ ຄັ້ງທີ 1 ປະຈຳປີ 2025 ໃນວັນທີ 09/04/2025, ເຊິ່ງມີມະຕິລາຍລະອຽດດັ່ງລຸ່ມນີ້:

1. ຮັບຮອງເອົາຜົນການປະເມີນຜົນງານການຊອກຫາລູກຄ້າ ແລະ ບໍລິຫານຊັບສິນປະຈຳປີ 2024 ທີ່ມອບໝາຍໃຫ້ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງຈັນຕອນເໜືອ ຈຳກັດ ເປັນຜູ້ຮັບຜິດຊອບ, ອັດຕາຄວາມສຳເລັດແມ່ນເປັນ 100% ແລະ ຊຳລະຄ່າບໍລິການທັງໝົດໃຫ້ແກ່ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງຈັນຕອນເໜືອ ຈຳກັດ ໃນປີ 2024 ລວມມູນຄ່າ 4,95 ຕື້ກີບ.

2. ຮັບຮອງເອົາການຕໍ່ອາຍຸສັນຍາການບໍລິການຄຸ້ມຄອງ ແລະ ບໍລິຫານຊັບສິນ ປະຈຳປີ 2025, ສືບຕໍ່ມອບຊັບສິນຂອງ ວຈຊຕ ໃຫ້ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງຈັນຕອນເໜືອ ຈຳກັດ ເປັນຜູ້ຮັບຜິດຊອບການຊອກຫາລູກຄ້າ ແລະ ບໍລິຫານ ໂດຍຄ່າບໍລິການບໍ່ເກີນຂອບເຂດສິດອຳນາດຂອງສະພາບໍລິຫານ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຮັບຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ

ຜູ້ອຳນວຍການໃຫຍ່ / ສະມາຊິກສະພາບໍລິຫານ

Vientiane Center Lao Public Company

王伟琨

Wang Wei Kun